ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 213 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 03 ເມສາ 2017

ສຳນັກງານ ຄຄຊ
ເລກທີ 0371
ວັນທີ 04 APR 2017
ໂທລະສັບ 021 21777

# ແຈ້ງການ

**ເຖິງ:** ບັນດາກົມ, ທຽບເທົ່າກົມພາຍໃນທະນາຄານແຫ່ງ ສປປ ລາວ , ທະນາຄານທຸລະກິດລັດ ທະນາຄານເອກະຊົນ ແລະ ສາຂາທະນາຄານຕ່າງປະເທດ.

**ເລື່ອງ:** ຈົ່ງມີສະຕິລະວັງຕົວຕໍ່ກັບປະກົດການຫຍໍ້ທໍ້ພາຍໃນສັງຄົມ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ທຫລ ສະບັບເລກທີ 06/ທຫລ, ລົງວັນທີ 25 ມີນາ 2005.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາກົມ, ທຽບເທົ່າກົມພາຍໃນທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດລັດ, ທະນາຄານເອກະຊົນ ແລະ ສາຂາທະນາຄານຕ່າງປະເທດ ຊາບວ່າ: ປັດ ຈຸບັນມີກຸ່ມຄົນບໍ່ດີໄດ້ເຄື່ອນໄຫວ ແລະ ສ້າງຄວາມບໍ່ສະຫງົບພາຍໃນສັງຄົມເປັນຕົ້ນ ຊິງຊັບ, ດຶງກະເປົາ, ຂີ້ລັກ, ງັດແງະ ຕາມເສັ້ນທາງ ແລະ ເຮືອນຊານ, ບ່ອນທີ່ມີຄວາມສ່ຽງ. ສະນັ້ນ, ຈິ່ງຮຽກຮ້ອງມາຍັງບັນດາທ່ານ ເພື່ອແຈ້ງໃຫ້ພະນັກງານທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທ່ານ ຈົ່ງມີສະຕິລະວັງຕົວໃນການໄປມາຕາມທາງ, ເພື່ອຫຼີກລ້ຽງບັນຫາທີ່ຈະເກີດຂຶ້ນ ແລະ ໃຫ້ເປັນເຈົ້າການປ້ອງກັນປະກົດການຫຍໍ້ທໍ້ດັ່ງກ່າວນີ້ດ້ວຍ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ